ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0597 /ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 20 FEB 2025

ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ,
ທ່ານ ຜູ້ຖືຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງການເລື່ອນກອງປະຊຸມຜູ້ຖືຮຸ້ນ ສະໄໝວິສາມັນ ຄັ້ງທີ 1/2025.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ຄຄຊ, ລົງ ວັນທີ 29 ມີນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.
- ອີງຕາມ ໃບລາຍງານແຈ້ງມະຕິສຳຄັນ ສະບັບເລກທີ 0470/ຜ-ຟຟລ, ລົງວັນທີ 17 ກຸມພາ 2025.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (**"ບໍລິສັດ"**) ແຈ້ງມາຍັງບັນດາທ່ານ ໃນການເລື່ອນມື້ຈັດກອງ ປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2025 ເນື່ອງຈາກມີຄວາມຈຳເປັນຂອງບໍລິສັດ, ເຊິ່ງມີລາຍລະອຽດລຸ່ມນີ້:

1. ກຳນົດວັນ-ເວລາ, ສະຖານທີ່ ແລະ ກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມ ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2025 ດັ່ງນີ້:
   1) ສະຖານທີ່: ຫ້ອງປະຊຸມຊັ້ນ 1 ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ **(ຕາມເດີມ).**
   2) ວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມ: ວັນທີ **24/02/2025 (ຕາມເດີມ).**
   3) ວັນ-ເວລາປະຊຸມ: ເລື່ອນຈາກວັນທີ 27/03/2025 ມາເປັນວັນທີ **31/03/2025** ເວລາ 13:30-15:00 ໂມງ ຜູ້ຖືຮຸ້ນລົງທະບຽນ, ເວລາ 15:00-17:00 ໂມງ ປະຊຸມວິສາມັນຜູ້ຖືຮຸ້ນ.

ດັ່ງນັ້ນ, ຈຶ່ງຂໍຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ຮຽນມາດ້ວຍຄວາມນັບຖື,
ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ດາວວຽງ ສຸນັນທະລາດ
ຮັກສາການ ຜູ້ອຳນວຍການໃຫຍ່

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la